ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 02 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 26 / 01 / 23

# ບົດສະຫຼຸບ

## ຕີລາຄາຜົນສຳເລັດການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX

- ອີງຕາມ ແຜນການຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 07/ຄປຈ, ລົງວັນທີ 28 ຕຸລາ 2022 ກ່ຽວກັບ ການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;
- ອີງຕາມ ມະຕິຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 263/ຄປຈ, ລົງວັນທີ 28 ຕຸລາ 2022 ວ່າດ້ວຍ ການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX.

ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນແຕ່ວັນທີ 5 ຫາ 30 ທັນວາ 2022 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະປະທານສະພາແຫ່ງຊາດ, ມີສະມາຊິກສະພາແຫ່ງຊາດ ເຂົ້າຮ່ວມ ຈຳນວນ 155 ທ່ານ, ຍິງ 32 ທ່ານ; ບໍ່ສາມາດເຂົ້າຮ່ວມຕະຫຼອດໄລຍະດຳເນີນກອງປະຊຸມ 9 ທ່ານ, ຍິງ 4 ທ່ານ ສາເຫດຍ້ອນເຂົ້າຮ່ວມປົກລະດັບ, ຝຶກອົບຮົມວຽກງານຕ່າງໆ ແລະ ບັນຫາສຸຂະພາບ. ກອງປະຊຸມ ໄດ້ມີການເຂົ້າຮ່ວມຂອງການນຳພັກ-ລັດ ຂັ້ນສູງ, ອະດີດການນຳພັກ-ລັດ ໃນພິທີເປີດ-ປິດ ຢ່າງພ້ອມພຽງ. ຜ່ານການກະກຽມ ແລະ ດຳເນີນກອງປະຊຸມ ສາມາດສະຫຼຸບຜົນໄດ້ ດັ່ງນີ້:

### I. <u>ຜົນສຳເລັດຂອງກອງປະຊຸມ</u>

#### ກ. <u>ການກະກຽມ ແລະ ດຳເນີນກອງປະຊຸມ</u>

#### 1. <u>ການກະກຽມກອງປະຊຸມ</u>

1) ຄະນະພັກ ແລະ ຄະນະປະຈຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ຊີ້ນຳບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ແລະ ກົງຈັກເລຂາທິການສະພາແຫ່ງຊາດ ຄົ້ນຄວ້າເນື້ອໃນກົດໝາຍທີ່ກ່ຽວຂ້ອງ, ເກັບກຳສະພາບພົ້ນເດັ່ນຂອງສັງຄົມ ເພື່ອເປັນຂໍ້ມູນໃນການກະກຽມດ້ານເນື້ອໃນຂອງກອງປະຊຸມ ໃຫ້ສອດຄ່ອງ ແລະ ໄດ້ຮັບຜົນດີ; ມອບໝາຍໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ປະສານສົມທົບ ແລະ ເຮັດວຽກຮ່ວມກັບບັນດາກະຊວງ, ອົງການ ໃນການປຶກສາຫາລືບັນດາຫົວຂໍ້ເນື້ອໃນຂອງກອງປະຊຸມ ໃຫ້ມີຄວາມເປັນເອກະພາບ ເພື່ອລາຍງານຂັ້ນເທິງຂອງຕົນ;

2) ຄະນະປະຈຳສະພາແຫ່ງຊາດ ໄດ້ຊີ້ນຳລົງແຜນການກະກຽມກອງປະຊຸມເລີ່ມແຕ່ເດືອນ ກັນຍາ 2022 ເປັນຕົ້ນມາ ແລະ ລາຍງານຕໍ່ກອງປະຊຸມກົມການເມືອງ ຮ່ວມກັບຄະນະເລຂາທິການສູນກາງພັກ ຄັ້ງວັນທີ 3 ພະຈິກ

2022 ເພື່ອຊີ້ທິດຊີ້ນຳດ້ານເນື້ອໃນ ແລະ ດ້ານອື່ນໆທີ່ກ່ຽວຂ້ອງ. ພ້ອມດຽວກັນນັ້ນ ກໍຍັງໄດ້ນຳພາ-ຊີ້ນຳບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເປັນເຈົ້າການຜັນຂະຫຍາຍທິດຊີ້ນຳດັ່ງກ່າວເຂົ້າໃນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 4 ສະພາແຫ່ງຊາດ ຊຸດທີ IX ໃຫ້ຮັບປະກັນຄຸນນະພາບ;

3) ຄະນະປະຈຳສະພາແຫ່ງຊາດ ໄດ້ຊີ້ນຳການດຳເນີນກອງປະຊຸມຍົກສູງຄຸນນະພາບດ້ານເນື້ອໃນ ໃຫ້ແກ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ຮອງປະທານຄະນະປະຈຳສະພາແຫ່ງຊາດ ເພື່ອສ້າງເງື່ອນໄຂໃຫ້ສະມາຊິກສະພາແຫ່ງຊາດ ແລກປ່ຽນຄວາມຄິດຄວາມເຫັນ ກັບພາກສ່ວນກ່ຽວຂ້ອງຕໍ່ ບົດລາຍງານຂອງລັດຖະບານ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ບົດລາຍງານແຜນການສ້າງ, ປັບປຸງກົດໝາຍ ແຕ່ປີ 2023-2025 ແລະ ຮ່າງກົດໝາຍຈຳນວນ 12 ສະບັບ. ນອກນັ້ນ, ຍັງໄດ້ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຈຳນວນ 2 ຄັ້ງ ເພື່ອກວດກາຄວາມພ້ອມດ້ານເນື້ອໃນ ກ່ອນນຳເຂົ້າພິຈາລະນາຢູ່ກອງປະຊຸມສະພາແຫ່ງຊາດ;

4) ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ ແລະ ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ກະກຽມດ້ານເນື້ອໃນຕ່າງໆ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ ບົດລາຍງານການເຄື່ອນໄຫວຂອງສະພາແຫ່ງຊາດ, ບົດລາຍງານແຜນການສ້າງ ແລະ ປັບປຸງກົດໝາຍ 2023-2025, ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງພາກສ່ວນຕ່າງໆ, ບົດເຈາະຈີ້ມ, ຄຳຊັກຖາມ, ບົດສັງລວມຄຳເຫັນຂອງປະທານກອງປະຊຸມ ແລະ ຮ່າງມະຕິກອງປະຊຸມ. ນອກນັ້ນ, ຍັງໄດ້ຊຸກຍູ້ກະຊວງ, ອົງການກະກຽມບັນດາບົດລາຍງານ, ບັນດາຮ່າງກົດໝາຍ, ບົດຊີ້ແຈງຕໍ່ວຽກງານຕ່າງໆ ແລະ ເອກະສານກ່ຽວຂ້ອງອື່ນ;

5) ບັນດາກະຊວງ, ອົງການ ແລະ ພາກສ່ວນກ່ຽວຂ້ອງ ໄດ້ເອົາໃຈໃສ່ກະກຽມເອກະສານເນື້ອໃນຕ່າງໆ ເພື່ອຂໍທິດຊີ້ນຳຈາກຂັ້ນເທິງຂອງຕົນ ໂດຍສະເພາະ ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ; ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ; ບົດລາຍງານຍຸດທະສາດວັດທະນາທຳ-ສັງຄົມ; ບົດລາຍງານການເຄື່ອນໄຫວຂອງອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ; ບົດລາຍງານການເຄື່ອນໄຫວຂອງອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ; ບົດປະກອບຄຳເຫັນຂອງອົງການແນວລາວສ້າງຊາດ; ບັນດາຮ່າງກົດໝາຍ 12 ສະບັບ ແລະ ວຽກງານອື່ນໆ;

6) ຄະນະເລຂາທິການສະພາແຫ່ງຊາດ ໄດ້ກະກຽມບັນດາເອກະສານຮັບໃຊ້ລວມຂອງກອງປະຊຸມ ເປັນຕົ້ນ ແຜນການ, ມະຕິດຳເນີນກອງປະຊຸມ, ມະຕິແບ່ງຄວາມຮັບຜິດຊອບພາຍໃນຄະນະປະທານສະພາແຫ່ງຊາດ, ບັນດາກົງຈັກສະພາແຫ່ງຊາດ; ມະຕິແຕ່ງຕັ້ງ ແລະ ແຜນແບ່ງຄວາມຮັບຜິດຊອບພາຍໃນກອງເລຂານຸການກອງປະຊຸມ; ແຈ້ງການຫາພາກສ່ວນຕ່າງໆ ແລະ ສິ່ງອຳນວຍຄວາມສະດວກດ້ານຕ່າງໆ ເຊັ່ນ: ວຽກງານປ້ອງກັນ, ການພະລິດ-ແຈກຢາຍບັດຕ່າງໆ; ວຽກງານຮັກສາສຸຂະພາບ ແລະ ປ້ອງກັນພະຍາດໂຄວິດ-19; ວຽກງານບໍລິຫານ-ພິທີການ ແລະ ການເງິນ; ວຽກງານສາຍດ່ວນກອງປະຊຸມ; ວຽກງານເອເລັກໂຕຼນິກ-ໄອທີ; ວຽກງານສື່ມວນຊົນ ໂດຍສະເພາະ ໄດ້ຈັດຕັ້ງການຖະແຫຼງຂ່າວກ່ອນການດຳເນີນກອງປະຊຸມສະພາແຫ່ງຊາດ.

2. <u>ການດຳເນີນກອງປະຊຸມ</u>

1) ຄະນະປະທານສະພາແຫ່ງຊາດ ໄດ້ປຶກສາຫາລື ແລະ ແບ່ງຄວາມຮັບຜິດຊອບໃນການນຳພາກອງປະຊຸມ ຕໍ່ແຕ່ລະເນື້ອໃນຢ່າງລະອຽດ, ຊັດເຈນແຕ່ຫົວທີ; ມີການກຳນົດເວລາໃຫ້ພາກສ່ວນຕ່າງໆ ຂຶ້ນລາຍງານ, ຂຶ້ນປະກອບຄຳເຫັນ, ຂຶ້ນຊີ້ແຈງ ແລະ ສະເໜີຮ່າງກົດໝາຍ ເຮັດໃຫ້ການດຳເນີນກອງປະຊຸມຄັ້ງນີ້ ເຕັມໄປດ້ວຍບັນຍາກາດຟົດຟື້ນ ແລະ ໄດ້ຮັບຜົນສຳເລັດເປັນຢ່າງດີ; ປະທານກອງປະຊຸມ ໄດ້ມີການເຈາະຈີ້ມຕໍ່ເນື້ອໃນມີຄວາມເລິກເຊິ່ງ ແລະ ເປັນບ່ອນອີງໃນການປະກອບຄຳເຫັນຂອງຜູ້ແທນ; ສະຫຼຸບສັງລວມບັນຫາຕ່າງໆ ມີຄວາມລະອຽດຊັດເຈນ ແລະ ການສະເໜີລົງຄະແນນສຽງ

ຮັບຮອງເອົາແຕ່ລະເນື້ອໃນຂອງມະຕິ ແມ່ນຮັບຮອງເອົາດ້ວຍຄະແນນສຽງເຫັນດີເປັນເອກະສັນ ຊຶ່ງມີ 4 ມະຕິ ຮັບຮອງເອົາດ້ວຍຄະແນນສຽງ 100%, ມີ 1 ມະຕິ ຮັບຮອງເອົາດ້ວຍຄະແນນສຽງ 95% ແລະ ມະຕິອື່ນໆແມ່ນຮັບຮອງເອົາດ້ວຍຄະແນນສຽງຫຼາຍກວ່າ 82% ຂຶ້ນໄປ. ນອກນັ້ນ, ຍັງໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ຂຶ້ນສະເໜີບົດລາຍງານ, ບົດປະກອບຄຳເຫັນຕໍ່ບົດລາຍງານຂອງພາກສ່ວນຕ່າງໆ ລວມທັງບັນຊາ, ຄວບຄຸມເວລາການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດ ມີຄວາມເດັດຂາດ ແລະ ໄປຕາມຂອບເວລາທີ່ຕັ້ງໄວ້;

2) ຄະນະລັດຖະບານ ນຳພາໂດຍທ່ານ ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ບັນດາກະຊວງ-ອົງການ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ; ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ; ອົງການແນວລາວສ້າງຊາດ ໄດ້ເປັນເຈົ້າການຂຶ້ນສະເໜີບົດລາຍງານ, ບົດປະກອບຄຳເຫັນ, ການຊີ້ແຈງ, ການສະເໜີຮ່າງກົດໝາຍດ້ວຍຄວາມຮັບຜິດຊອບ, ເນື້ອໃນມີຄວາມເລິກເຊິ່ງ ແລະ ລະອຽດຊັດເຈນດີສົມຄວນ; ຄະນະລັດຖະບານຈຳນວນໜຶ່ງພ້ອມດ້ວຍພະນັກງານກ່ຽວຂ້ອງ ໄດ້ເຂົ້າຮ່ວມຕິດຕາມກອງປະຊຸມ ເພື່ອເກັບກຳຄຳຄິດຄຳເຫັນຂອງຜູ້ແທນກອງປະຊຸມ ແລະ ນຳເອົາຄຳຄິດຄຳເຫັນດັ່ງກ່າວ ປັບປຸງເຂົ້າໃນເນື້ອໃນຂອງແຕ່ລະພາກສ່ວນມີຄວາມສົມບູນ ຊຶ່ງກອງປະຊຸມຄັ້ງນີ້ ມີພາກສ່ວນຕ່າງໆຂຶ້ນຊີ້ແຈງ ຈຳນວນ 21 ພາກສ່ວນ ກວມເອົາ 28 ເທື່ອທ່ານ, ຍິງ 4 ເທື່ອທ່ານ;

3) ຄະນະປະຈຳສະພາແຫ່ງຊາດ ໄດ້ຂຶ້ນສະເໜີບົດປະກອບຄຳເຫັນ ໃນນາມຕາງໜ້າຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ແລະ ພາກສ່ວນຕ່າງໆ ຊຶ່ງສ່ອງແສງໃຫ້ເຫັນທັດສະນະຂອງສະພາແຫ່ງຊາດ ຕໍ່ເນື້ອໃນຕ່າງໆ ທີ່ນຳມາພິຈາລະນາຢູ່ກອງປະຊຸມ ແລະ ເປັນຂໍ້ມູນສຳຄັນໃຫ້ແກ່ພາກສ່ວນກ່ຽວຂ້ອງ ນຳໄປປັບປຸງເນື້ອໃນບົດລາຍງານ, ເນື້ອໃນມະຕິກອງປະຊຸມໃຫ້ມີຄວາມໜັກແໜ້ນ; ຂຶ້ນລາຍງານການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ຊີ້ແຈງຕໍ່ບັນຫາຕ່າງໆ ຈຳນວນໜຶ່ງ ທີ່ຜູ້ແທນມີຄວາມສົນໃຈ ຈຳນວນ 11 ເທື່ອທ່ານ, ຍິງ 3 ເທື່ອທ່ານ;

4) ສະມາຊິກສະພາແຫ່ງຊາດ ເອົາໃຈໃສ່ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ເນື້ອໃນບົດລາຍງານ, ຮ່າງກົດໝາຍ, ຮ່າງມະຕິກອງປະຊຸມ ໂດຍສົມທຽບກັບສະພາບການຢູ່ເຂດເລືອກຕັ້ງ ເຮັດໃຫ້ການປະກອບຄຳເຫັນມີຂໍ້ມູນ, ມີຈຸດສຸມ, ມີເຫດມີຜົນ ແລະ ສະເໜີວິທີການແກ້ໄຂຢ່າງຈະແຈ້ງ ຊຶ່ງມີຜູ້ລົງທະບຽນປະກອບຄຳເຫັນ ທັງໝົດ 593 ເທື່ອທ່ານ, ຍິງ 104 ເທື່ອທ່ານ ແລະ ໄດ້ປະກອບຄຳເຫັນຕົວຈິງ 340 ເທື່ອທ່ານ, ຍິງ 56 ເທື່ອທ່ານ. ນອກນັ້ນ, ຍັງໄດ້ຍົກມືປະກອບຄຳເຫັນກັບທີ່ 146 ເທື່ອທ່ານ, ຍິງ 29 ເທື່ອທ່ານ ແລະ ຍົກມືຊັກຖາມ 90 ເທື່ອທ່ານ, ຍິງ 13 ເທື່ອທ່ານ;

5) ກອງເລຂານຸການກອງປະຊຸມ ຊຶ່ງປະກອບດ້ວຍຄະນະເລຂາທິການສະພາແຫ່ງຊາດ, ບັນດາກຳມາທິການ ແລະ ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ປະສານສົມທົບເຊິ່ງກັນ ແລະ ກັນ ເພື່ອເປັນເສນາທິການດ້ານເນື້ອໃນ ເປັນຕົ້ນ ຮ່າງບົດລາຍງານການເຄື່ອນໄຫວຂອງສະພາແຫ່ງຊາດ, ແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025, ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ, ບົດເຈາະຈີ້ມ, ບົດສັງລວມຄຳເຫັນຂອງປະທານກອງປະຊຸມ, ຮ່າງມະຕິກອງປະຊຸມ; ຂຶ້ນສະເໜີຮ່າງມະຕິກອງປະຊຸມ ລວມທັງລາຍງານການປັບປຸງຮ່າງມະຕິດັ່ງກ່າວ, ສະໜອງຂໍ້ມູນ ແລະ ຊ່ວຍຄະນະປະທານນຳພາການດຳເນີນກອງປະຊຸມ. ພ້ອມກັນນັ້ນ, ຍັງໄດ້ຊີ້ນຳ-ນຳພາພະນັກງານ-ລັດຖະກອນ ເປັນເຈົ້າການອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ກອງປະຊຸມໄດ້ຮັບຜົນສຳເລັດ ດັ່ງນີ້:

- ເປັນໃຈກາງປະສານສົມທົບກັບພາກສ່ວນຕ່າງໆ ນຳເອົາບັນດາເອກະສານມາຄຸ້ມຄອງ ແລະ ແຈກຢາຍໃຫ້ກອງປະຊຸມທັນເວລາ ຊຶ່ງມີເອກະສານຂອງພາກສ່ວນຕ່າງໆ ນຳມາແຈກຢາຍທັງໝົດຈຳນວນ 116 ສະບັບ ໃນນີ້, ລັດຖະບານ 30 ສະບັບ; ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ 9 ສະບັບ; ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ 7 ສະບັບ, ສະພາແຫ່ງຊາດ 68 ສະບັບ ແລະ ອົງການແນວລາວສ້າງຊາດ 2 ສະບັບ;
- ຈັດຕັ້ງການບັນທຶກ ແລະ ແກະຄຳເຫັນຕໍ່ເນື້ອໃນຕ່າງໆຂອງກອງປະຊຸມ ໄດ້ຈຳນວນ 8 ເນື້ອໃນ ຄື: ວຽກງານລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ; ແກະເນື້ອໃນການປະກອບຄຳເຫັນຂອງຜູ້ແທນຕໍ່ວຽກງານຕ່າງໆ ໄດ້ທັງໝົດ 358 ເທື່ອທ່ານ; ຕັ້ງໄຟລ໌ສະໜອງຂໍ້ມູນ

ໃຫ້ສະມາຊິກສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງ ໄດ້ທັງໝົດ 300 ເທື່ອທ່ານ, ຍິງ 120 ເທື່ອທ່ານ. ໃນນີ້, ມີຂໍ້ມູນປັບ ລາຍລັກອັກສອນຕາມແບບຟອມ ຈຳນວນ 24 ເທື່ອທ່ານ, ຍິງ 10 ເທື່ອທ່ານ;

- ຈັດຕັ້ງການເປີດຮັບໃຊ້ສາຍດ່ວນໃນໄລຍະການດຳເນີນກອງປະຊຸມທັງໝົດ 655 ສາຍ, ສາມາດສັງລວມເນື້ອໃນ ໄດ້ຈຳນວນ 352 ເລື່ອງ. ບັນຫາທີ່ປະຊາຊົນໃຫ້ຄວາມສົນໃຈຫຼາຍ ແມ່ນການຈ່າຍຄ່າຊົດເຊີຍຜົນກະທົບຈາກໂຄງການລົງທຶນຂອງລັດ; ອັດຕາເງິນເຟີ້ສູງ ແລະ ການຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫຼາດແພງ; ການປະຕິບັດໜ້າທີ່ຂອງພະນັກງານຈຳນວນໜຶ່ງບໍ່ໂປ່ງໃສ; ການຈັດສັນອາຊີບໃຫ້ປະຊາຊົນ ແລະ ເພີ່ມຄ່າແຮງງານ; ການອະນຸຍາດເຊົ່າສຳປະທານທີ່ດິນ ແລະ ຂຸດຄົ້ນແຮ່ທາດ; ການເພີ່ມໂກຕາລັດຖະກອນຄູ, ແພດໝໍ ແລະ ອື່ນໆ;

- ຈັດຕັ້ງການປະເມີນບຸກຄະລາກອນຂອງພາກສ່ວນຕ່າງໆ ທີ່ລາຍງານ ແລະ ຊີ້ແຈງຕໍ່ບັນດາເນື້ອໃນ ຢູ່ກອງປະຊຸມສະພາແຫ່ງຊາດ ໄດ້ທັງໝົດ 30 ເທື່ອທ່ານ, ຍິງ 10 ເທື່ອທ່ານ ຊຶ່ງຜູ້ໄດ້ຮັບຄະແນນສູງສຸດ 8 ຄະແນນ, ຄະແນນຕ່ຳ 6 ຄະແນນ;

- ວຽກງານປ້ອງກັນ ໄດ້ປະສານສົມທົບ ກັບສອງກຳລັງ ເພື່ອປ້ອງກັນເວນຍາມ ໃນໄລຍະດຳເນີນກອງປະຊຸມເປັນລະບຽບຮຽບຮ້ອຍ ເປັນຕົ້ນ ຕິດຕັ້ງເຄື່ອງເອັກສະເຣພາຫະນະ, ບັນດາຜູ້ແທນກອງປະຊຸມ ເພື່ອກວດກາວັດຖຸລະເບີດ, ອາວຸດ; ຕິດຕາມກວດກາການເຂົ້າ-ອອກ ຕຶກຫໍສະພາແຫ່ງຊາດຂອງພາກສ່ວນຕ່າງໆ ເພື່ອໃຫ້ຕິດບັດຢ່າງເຂັ້ມງວດ; ຜະລິດບັດຕ່າງໆ ຈຳນວນ 4.100 ບັດ ແລະ ໄດ້ແຈກຢາຍຕົວຈິງ ຈຳນວນ 3.554 ບັດ;

- ວຽກງານຮັກສາສຸຂະພາບ ໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຕິດຕາມ ແລະ ເບິ່ງແຍງສຸຂະພາບຂອງຜູ້ແທນໃນໄລຍະດຳເນີນກອງປະຊຸມ ເປັນຕົ້ນ ກວດສຸຂະພາບ ໄດ້ຈຳນວນ 673 ເທື່ອທ່ານ, ຍິງ 214 ເທື່ອທ່ານ ແລະ ສະໜອງຢາໃຫ້ພາກສ່ວນຕ່າງໆ ໄດ້ຈຳນວນ 654 ເທື່ອທ່ານ, ຍິງ 204 ເທື່ອທ່ານ; ຈັດຕັ້ງການກວດຫາເຊື້ອພະຍາດໂຄວິດ-19 ຈຳນວນ 2 ຄັ້ງ; ວຽກງານບໍລິຫານ-ພິທີການ ແລະ ການເງິນ ໄດ້ຈັດສັນພາຫະນະ, ບ່ອນຈອດລົດ, ບໍລິການອາຫານຫວ່າງ-ເຄື່ອງດື່ມ, ສະຖານທີ່ພັກເຊົາຂອງຜູ້ແທນ ແລະ ວຽກບໍລິການອື່ນໆ; ຄຸ້ມຄອງ ແລະ ສະໜອງງົບປະມານໃຫ້ຜູ້ແທນກອງປະຊຸມທັນເວລາ; ອຳນວຍຄວາມສະດວກດ້ານເອເລັກໂຕຣນິກ-ໄອທີ ໃຫ້ແກ່ກອງປະຊຸມ ເປັນຕົ້ນ ນຳເອົາເອກະສານຂຶ້ນລະບົບຄອມພິວເຕີ ທັງໝົດ 147 ເນື້ອໃນ, ຄວບຄຸມລະບົບການສະເໜີຕົວ, ການປະກອບຄຳເຫັນ, ການລົງຄະແນນສຽງ; ຕິດຕາມຄວາມປອດໄພໄລຍະດຳເນີນກອງປະຊຸມ ແລະ ອື່ນໆ;

- ວຽກງານສື່ມວນຊົນ ໄດ້ຈັດສຳພາດບັນດາຜູ້ແທນ ແລະ ພາກສ່ວນກ່ຽວຂ້ອງ ໃນໄລຍະດຳເນີນກອງປະຊຸມ ໄດ້ຈຳນວນ 29 ທ່ານ, ຍິງ 3 ທ່ານ; ຈັດຕັ້ງການຖະແຫຼງຂ່າວຜົນສຳເລັດກອງປະຊຸມສະພາແຫ່ງຊາດ ແລະ ການພິຈາລະນາວຽກງານຕ່າງໆ; ຄຸ້ມຄອງການຖ່າຍທອດສົດ ຕໍ່ການພິຈາລະນາແຕ່ລະເນື້ອໃນ ແມ່ນເຮັດໄດ້ດີສົມຄວນ, ການອອກຂ່າວທັນສະພາບການ.

ຂ. <u>ຜົນໄດ້ຮັບດ້ານເນື້ອໃນຂອງກອງປະຊຸມ</u>

ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ລົງຄະແນນສຽງຮັບຮອງເອົາເນື້ອໃນຕ່າງໆຂອງກອງປະຊຸມທັງໝົດ 22 ສະບັບ ດ້ວຍຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ສະເລ່ຍຄະແນນສູງສຸດ 100% ແລະ ຕ່ຳສຸດ 82% ຊຶ່ງອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ດັ່ງນີ້:

1. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການສະຫຼຸບຍອດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021; ຄາດຄະເນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ໄດ້ຮັບຄະແນນ 98,57%;

2. ມະຕິວ່າດ້ວຍການຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ ໄດ້ຮັບຄະແນນ 100%;

3. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈໍາປີ 2022 ແລະ ທິດທາງແຜນການ ປະຈໍາປີ 2023 ຂອງອົງການກວດກາແຫ່ງລັດ ໄດ້ຮັບຄະແນນ 100%;

4. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈໍາປີ 2022 ແລະ ທິດທາງວຽກງານ ປະຈໍາປີ 2023 ໄດ້ຮັບຄະແນນ 99,32%;

5. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈໍາປີ 2022 ແລະ ທິດທາງວຽກງານ ປະຈໍາປີ 2023 ໄດ້ຮັບຄະແນນ 100%;

6. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈໍາປີ 2022 ແລະ ແຜນການ ປະຈໍາປີ 2023 ໄດ້ຮັບຄະແນນ 100%;

7. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ IX ແຕ່ປີ 2023-2025 ໄດ້ຮັບຄະແນນ 99,32 %;

8. ມະຕິວ່າດ້ວຍການເລືອກຕັ້ງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຜູ້ໃໝ່ ໄດ້ຮັບຄະແນນ 98,67%;

9. ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈໍາປີ 2022 ແລະ ທິດທາງແຜນການ ປະຈໍາປີ 2023 ໄດ້ຮັບຄະແນນ 100%;

10. ມະຕິວ່າດ້ວຍການຮັບຮອງເອົາການສະເໜີຂໍພັກການ-ຮັບອຸດໜູນບໍານານຂອງທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ;

11. ມະຕິວ່າດ້ວຍການຮັບຮອງເອົາບັນດາກົດໝາຍ ຈໍານວນ 12 ສະບັບ ຄື:

(1) ມະຕິຮັບຮອງເອົາກົດໝາຍວ່າດ້ວຍພິພິທະພັນ (ສ້າງໃໝ່) ໄດ້ຮັບຄະແນນ 97,16%;

(2) ມະຕິຮັບຮອງເອົາກົດໝາຍວ່າດ້ວຍການທາງນໍ້າ (ສ້າງໃໝ່) ໄດ້ຮັບຄະແນນ 93,75%;

(3) ມະຕິຮັບຮອງເອົາກົດໝາຍວ່າດ້ວຍໜັງສືຜ່ານແດນ (ສ້າງໃໝ່) ໄດ້ຮັບຄະແນນ 95,91%;

(4) ມະຕິຮັບຮອງເອົາກົດໝາຍວ່າດ້ວຍທະນາຍຄວາມ (ປັບປຸງ) ໄດ້ຮັບຄະແນນ 82,85%;

(5) ມະຕິຮັບຮອງເອົາກົດໝາຍວ່າດ້ວຍທະບຽນສານ (ປັບປຸງ) ໄດ້ຮັບຄະແນນ 84,72%;

(6) ມະຕິຮັບຮອງເອົາກົດໝາຍວ່າດ້ວຍການກວດກາລັດ (ປັບປຸງ) ໄດ້ຮັບຄະແນນ 91,03%;

(7) ມະຕິຮັບຮອງເອົາກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ (ປັບປຸງ) ໄດ້ຮັບຄະແນນ 97, 88%;

(8) ມະຕິຮັບຮອງເອົາກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ (ປັບປຸງ) ໄດ້ຮັບຄະແນນ 98,6%;

(9) ມະຕິຮັບຮອງເອົາກົດໝາຍວ່າດ້ວຍການກວດສອບແຫ່ງລັດ (ປັບປຸງ) ໄດ້ຮັບຄະແນນ 97,65%;

(10) ມະຕິຮັບຮອງເອົາກົດໝາຍວ່າດ້ວຍອົງການໄອຍະການທະຫານ (ປັບປຸງ) ໄດ້ຮັບຄະແນນ 94,55%;

(11) ມະຕິຮັບຮອງເອົາກົດໝາຍວ່າດ້ວຍທຸລະກໍາທາງເອເລັກໂຕຣນິກ (ປັບປຸງ) ໄດ້ຮັບຄະແນນ 99,3%;

(12) ມະຕິຮັບຮອງເອົາກົດໝາຍວ່າດ້ວຍວິສາຫະກິດ (ປັບປຸງ)ໄດ້ຮັບຄະແນນ 95,89%.

ອັນພົ້ນເດັ່ນ, ກອງປະຊຸມຄັ້ງນີ້ ໃນວາລະພິຈາລະນາວຽກງານລັດຖະບານ ໄດ້ມີການຮັບຮອງເອົາບົດລາຍງານກ່ຽວກັບການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານ ປະຈໍາປີ 2021, ຄາດຄະເນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈໍາປີ 2022 ແລະ ທິດທາງແຜນການ ປະຈໍາປີ 2023 ຊຶ່ງເຫັນວ່າຖ້າທຽບໃສ່ກອງປະຊຸມຜ່ານມາ ແມ່ນສາມາດບຸກທະລຸດ້ານເວລາ ແລະ ທັນສະພາບການ ເພື່ອເປັນບ່ອນອີງໃຫ້ພາກສ່ວນຕ່າງໆ.

ຜົນສໍາເລັດຂອງກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີຄັ້ງທີ IX ເຂົ້າສູ່ຊີວິດຕົວຈິງ, ແມ່ນໝາກຜົນແຫ່ງສະຕິປັນຍາ, ການຍົກສູງຄວາມຮັບຜິດຊອບການເມືອງຂອງບັນດາສະມາຊິກສະພາແຫ່ງຊາດ, ຄວາມຕັດສິນໃຈສູງຂອງລັດຖະບານ, ອົງການທີ່ກ່ຽວຂ້ອງ ທີ່ຈະສືບຕໍ່ພັດທະນາປະເທດຊາດ, ເຮັດໃຫ້ຄວາມ

ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຜ່ອນຄາຍລົງເທື່ອລະກ້າວ, ນຳເອົາປະເທດຊາດກ້າວຂຶ້ນ, ມີຄວາມຈະເລີນຢ່າງໝັ້ນແໜ້ນ; ສຳລັບການສ້າງ ແລະ ປັບປຸງກົດໝາຍ ເປັນການເພີ່ມເຄື່ອງມືໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ແລະ ສາມາດນຳເອົາບັນດາກົດໝາຍ ທີ່ຖືກຮັບຮອງໃນຄັ້ງນີ້ ກໍຄືນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ລັດ ໄປເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງທົ່ວປະເທດຮັບຮູ້, ເຂົ້າໃຈຢ່າງກວ້າງຂວາງ ແລະ ເປັນເຈົ້າການເຄົາລົບ, ປະຕິບັດກົດໝາຍຢ່າງເຂັ້ມງວດ.

### ຄ. <u>ສາເຫດທີ່ພາໃຫ້ມີຈຸດດີ</u>

1. ຄະນະປະຈຳພັກ, ຄະນະປະຈຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ຊີ້ນຳຢ່າງເປັນລະບົບປົກກະຕິ, ມີການລາຍງານເພື່ອຂໍທິດຊີ້ນຳຈາກກົມການເມືອງສູນກາງພັກ ກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມສະພາແຫ່ງຊາດ; ເປັນເຈົ້າການຜັນຂະຫຍາຍທິດຊີ້ນຳ ແລະ ນຳພາຊຸກຍູ້ກົງຈັກເສນາທິການຂອງສະພາແຫ່ງຊາດ ກະກຽມເນື້ອໃນ ແລະ ວຽກງານຕ່າງໆຮອບດ້ານໃຫ້ແກ່ກອງປະຊຸມຄັ້ງນີ້ໃຫ້ມີຜົນສຳເລັດ ແລະ ທັນເວລາ;

2. ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ ແລະ ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ກໍຄືກົງຈັກເສນາທິການ ໄດ້ເປັນເຈົ້າການກະກຽມດ້ານຕ່າງໆຕາມຂົງເຂດວຽກງານທີ່ຕົນຮັບຜິດຊອບ ໄດ້ຮັບຜົນສຳເລັດ ເປັນຕົ້ນບັນດາເນື້ອໃນກອງປະຊຸມ, ສິ່ງອຳນວຍຄວາມສະດວກ ແລະ ອື່ນໆ. ປຶກສາຫາລືສ້າງຄວາມເປັນເອກະພາບກັບບັນດາກະຊວງ, ອົງການ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຂໍທິດຊີ້ນຳຈາກກອງປະຊຸມຄະນະປະຈຳສະພາແຫ່ງຊາດ;

3. ລັດຖະບານ ກໍຄື ບັນດາກະຊວງ, ອົງການ ແລະ ພາກສ່ວນກ່ຽວຂ້ອງ ໄດ້ມີຄວາມຮັບຜິດຊອບສູງຕໍ່ສະພາແຫ່ງຊາດ ໃນການກະກຽມບັນດາເນື້ອໃນຕາມທີ່ກຳນົດໃນແຜນການກອງປະຊຸມຄັ້ງນີ້ ມີຄຸນນະພາບດີ ແລະ ສາມາດສົ່ງເອກະສານໃຫ້ສະພາແຫ່ງຊາດ ທັນເວລາ; ເອົາໃຈໃສ່ໃຫ້ການຮ່ວມມືໃນການປະສານສົມທົບກັບບັນດາກຳມາທິການ ແລະ ພາກສ່ວນກ່ຽວຂ້ອງ ເພື່ອນຳເອົາບັນດາເນື້ອໃນເຂົ້າຜ່ານກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ປັບປຸງຕາມທິດຊີ້ນຳຂອງຄະນະປະຈຳສະພາແຫ່ງຊາດ ກ່ອນນຳເຂົ້າພິຈາລະນາຢູ່ກອງປະຊຸມສະພາແຫ່ງຊາດ; ພ້ອມນັ້ນ, ຍັງໄດ້ເຂົ້າຮ່ວມ ແລະ ຕິດຕາມກອງປະຊຸມຢ່າງເປັນປົກກະຕິ;

4. ບັນດາສະມາຊິກສະພາແຫ່ງຊາດ ໄດ້ຍົກສູງຄວາມຮັບຜິດຊອບຂອງຕົນ ໃນການເປັນຕົວແທນແຫ່ງສິດຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ເພື່ອປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍເປັນຢ່າງດີ ໂດຍສະເພາະ ການຄົ້ນຄວ້າການປະກອບຄຳເຫັນ, ການຊັກຖາມຕໍ່ເນື້ອໃນຕ່າງໆ ລວມທັງການປະຕິບັດລະບຽບດຳເນີນກອງປະຊຸມສະພາແຫ່ງຊາດ ຢ່າງເຂັ້ມງວດ; ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ກໍໄດ້ເອົາໃຈໃສ່ປະສານສົມທົບເຊິ່ງກັນ ແລະ ກັນ ໃນການປຶກສາຫາລື, ຄົ້ນຄວ້າປະກອບຄຳເຫັນຕໍ່ເນື້ອໃນຕ່າງໆ ເປັນແຕ່ລະເຂດເລືອກຕັ້ງ ໄດ້ຮັບຜົນດີສົມຄວນ;

5. ກອງເລຂານຸການກອງປະຊຸມ ໄດ້ເປັນໃຈກາງປະສານສົມທົບກັບພາກສ່ວນຕ່າງໆ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເພື່ອອຳນວຍຄວາມສະດວກຮອບດ້ານໃຫ້ແກ່ການດຳເນີນກອງປະຊຸມ ໄດ້ຮັບຜົນສຳເລັດຢ່າງຈົບງາມ;

6. ທຸກພາກສ່ວນ ໄດ້ເອົາໃຈໃສ່ປະກອບສ່ວນໃຫ້ແກ່ການດຳເນີນກອງປະຊຸມສະພາແຫ່ງຊາດໃນຄັ້ງນີ້ ເປັນຕົ້ນ ການຕິດຕາມກອງປະຊຸມ, ການສະໜອງຂໍ້ມູນ-ຂ່າວສານ ແລະ ການສະໜັບສະໜູນສິ່ງອຳນວຍຄວາມສະດວກຈຳນວນໜຶ່ງ ເຮັດໃຫ້ກອງປະຊຸມດຳເນີນໄປດ້ວຍຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

## ໒. <u>ດ້ານຄົງຄ້າງ ແລະ ສາເຫດຂໍ້ຄົງຄ້າງ</u>

### 1. <u>ດ້ານຄົງຄ້າງ</u>

1) ການຄົ້ນຄວ້າສະພາບພົ້ນເດັ່ນທີ່ເກີດຂຶ້ນໃນສັງຄົມ ໂດຍຜ່ານການລົງຕິດຕາມກວດກາຂອງບັນດາກຳມາທິການ

ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ເພື່ອກໍານົດເປັນເນື້ອໃນຄໍາຊັກຖາມໃຫ້ພາກສ່ວນກ່ຽວຂ້ອງມາຊີ້ແຈງຕໍ່ກອງປະຊຸມມີຄວາມຊັກຊ້າ; ຄໍາຊັກຖາມຈໍານວນໜຶ່ງຍັງມີລັກສະນະຊໍ້າຊ້ອນກັນ; ການຕິດຕາມ, ບັນທຶກເນື້ອໃນການປະກອບຄໍາເຫັນຜູ້ແທນ ຂອງພາກສ່ວນກ່ຽວຂ້ອງຈໍານວນໜຶ່ງບໍ່ທັນເປັນປົກກະຕິ;

2) ຄວາມເປັນເຈົ້າການປະສານສົມທົບ ລະຫວ່າງກໍາມາທິການ ກັບພາກສ່ວນກ່ຽວຂ້ອງ ໃນການຄົ້ນຄວ້າຮ່າງກົດໝາຍທີ່ນໍາມາຜ່ານກອງປະຊຸມສະພາແຫ່ງຊາດ ຍັງບໍ່ທັນລະອຽດຊັດເຈນດີ ເຖິງວ່າໄດ້ນໍາເຂົ້າພິຈາລະນາຢູ່ກອງປະຊຸມສໍາມະນາປຶກສາດ້ານເນື້ອໃນແລ້ວ ແຕ່ເຫັນວ່າເນື້ອໃນຂອງຮ່າງກົດໝາຍຈໍານວນໜຶ່ງກໍຍັງບໍ່ທັນລະອຽດ ແລະ ບໍ່ທັນເປັນເອກະພາບກັນ ໂດຍສະເພາະ ທີ່ຂອງຮ່າງກົດໝາຍວ່າດ້ວຍການທາງນໍ້າ; ການອະທິບາຍຊີ້ແຈງຂອງບາງຄະນະຮັບຜິດຊອບຮ່າງກົດໝາຍ ຕໍ່ຄໍາເຫັນຂອງຜູ້ແທນຍັງບໍ່ທັນຄົບຖ້ວນ, ບໍ່ລະອຽດຊັດເຈນ ຕາມການສະເໜີ;

3) ການຄົ້ນຄວ້າກະກຽມປະກອບຄໍາເຫັນຂອງສະມາຊິກສະພາແຫ່ງຊາດຈໍານວນໜຶ່ງ ມີລັກສະນະຕໍານິຫຼາຍກວ່າຊອກຫາວິທີການແກ້ໄຂຮ່ວມລັດຖະບານ ແລະ ພາກສ່ວນກ່ຽວຂ້ອງ ພາໃຫ້ເປັນຊ່ອງຫວ່າງໃຫ້ແກ່ສື່ສັງຄົມອອນລາຍ ນໍາເອົາຄໍາເຫັນຂອງຜູ້ແທນໄປວິພາກວິຈານຕ່າງໆນາໆ.

2. <u>ສາເຫດຂໍ້ຄົງຄ້າງ</u>

1) ຄວາມເປັນເຈົ້າການຄົ້ນຄວ້າເນື້ອໃນຄໍາຊັກຖາມ ຂອງບັນດາກໍາມາທິການ ແລະ ພາກສ່ວນກ່ຽວຂ້ອງບໍ່ທັນເລິກເຊິ່ງ, ເນື້ອໃນຈໍານວນໜຶ່ງບໍ່ທັນມີຈຸດສຸມເທົ່າທີ່ຄວນ ເຮັດໃຫ້ການຊີ້ແຈງຂອງພາກສ່ວນກ່ຽວຂ້ອງຈໍານວນໜຶ່ງບໍ່ທັນຈະແຈ້ງ, ບໍ່ທັນມີມາດຕະການແກ້ໄຂຢ່າງເດັດຂາດ ແລະ ຈິງຈັງແທ້; ການປະສານສົມທົບກັບບັນດາກະຊວງ, ອົງການ ຍັງບໍ່ທັນເປັນລະບົບກົມກຽວ ເຮັດໃຫ້ເນື້ອໃນຄໍາຊັກຖາມຈໍານວນໜຶ່ງ ມີການຊໍ້າຊ້ອນກັນ ຈຶ່ງຕ້ອງໄດ້ຍົກເລີກການມາຊີ້ແຈງ;

2) ຄວາມເອົາໃຈໃສ່ໃນການປະສານສົມທົບ ຂອງບັນດາກໍາມາທິການກ່ຽວຂ້ອງຈໍານວນໜຶ່ງ ກັບຄະນະຮັບຜິດຊອບຮ່າງກົດໝາຍບໍ່ທັນກົມກຽວກັນແຕ່ຫົວທີ; ບາງຮ່າງກົດໝາຍບໍ່ທັນລະອຽດເລິກເຊິ່ງ, ຂໍ້ມູນບໍ່ຊັດເຈນ ເຮັດໃຫ້ເນື້ອໃນຈໍານວນໜຶ່ງບໍ່ທັນຄົບຖ້ວນ ແລະ ຮັດກຸມເທົ່າທີ່ຄວນ;

3) ຍ້ອນການຄົ້ນຄວ້າ, ກໍາແໜ້ນຂໍ້ມູນຂອງສະມາຊິກສະພາແຫ່ງຊາດຈໍານວນໜຶ່ງ ເພື່ອປະກອບຄໍາເຫັນໃສ່ບາງເນື້ອໃນບໍ່ທັນເລິກເຊິ່ງ, ຈໍານວນໜຶ່ງມີລັກສະນະອາລໍາພະບົດຫຼາຍ ເຮັດໃຫ້ການປະກອບຄໍາເຫັນກາຍເວລາກໍານົດ.

3. <u>ບົດຮຽນຖອດຖອນໄດ້</u>

1) ສະພາແຫ່ງຊາດ ດໍາເນີນກອງປະຊຸມຮ່ວມກັບລັດຖະບານ ເພື່ອປຶກສາຫາລືຫົວຂໍ້ເນື້ອໃນຕ່າງໆ, ບັນດາກໍາມາທິການ ເພີ່ມທະວີຄວາມເອົາໃຈໃສ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການກະກຽມເນື້ອໃນຕ່າງໆຂອງກອງປະຊຸມ ໃຫ້ມີຄວາມເປັນເອກະພາບແຕ່ຫົວທີ ຕາມກົດໝາຍກໍານົດ ກ່ອນນໍາເຂົ້າພິຈາລະນາຢູ່ກອງປະຊຸມສະພາແຫ່ງຊາດ ຈະເຮັດໃຫ້ເນື້ອໃນມີຄຸນນະພາບ ແລະ ໄດ້ຮັບຜົນສໍາເລັດຕາມຄາດໝາຍທີ່ວາງໄວ້;

2) ບັນດາກໍາມາທິການ ແລະ ພາກສ່ວນກ່ຽວຂ້ອງ ຍົກສູງຄວາມຮັບຜິດຊອບໃນການເກັບກໍາຂໍ້ມູນທີ່ໄດ້ຈາກການເຄື່ອນໄຫວຕິດຕາມກວດກາ, ການດໍາເນີນກອງປະຊຸມຄົບຄະນະ ເພື່ອສ້າງເປັນຄໍາຊັກຖາມໃຫ້ສໍາເລັດແຕ່ຫົວທີ ແລະ ສອດຄ່ອງກັບສະພາບເຄື່ອນໄຫວຂອງສັງຄົມ ສົ່ງໃຫ້ກະຊວງ, ອົງການ ແລະ ພາກສ່ວນກ່ຽວຂ້ອງທັນເວລາ ຈະເຮັດໃຫ້ການມາຊີ້ແຈງຢູ່ກອງປະຊຸມ ມີຄວາມເປັນເອກະພາບ, ເນື້ອໃນສອດຄ່ອງຕາມຄໍາຊັກຖາມທີ່ຕັ້ງຂຶ້ນ ແລະ ຕິດພັນກັບບົດລາຍງານຂອງພາກສ່ວນກ່ຽວຂ້ອງ; ລວມທັງການເພີ່ມເວລາຊີ້ແຈງໃຫ້ກະຊວງ, ອົງການຫຼາຍຂຶ້ນ, ຈັດລຽງດ້ານເນື້ອໃນທີ່ຕິດພັນກັນ ໃຫ້ມີຄວາມຕໍ່ເນື່ອງກັນ ຈະເຮັດໃຫ້ການພິຈາລະນາ ແລະ ປະກອບຄໍາຄິດຄໍາເຫັນຂອງສະມາຊິກສະພາແຫ່ງຊາດ ມີຄວາມກົມກຽວໃນຂົງເຂດວຽກງານທີ່ຕິດພັນກັນ;

3) ບັນດາກໍາມາທິການ ແລະ ພາກສ່ວນກ່ຽວຂ້ອງ ພາຍຫຼັງສໍາເລັດການດໍາເນີນກອງປະຊຸມ ເອົາໃຈໃສ່ປະສານ

ສົມທົບກັບພາກສ່ວນກ່ຽວຂ້ອງຕ່າງໆ ທີ່ຮັບຜິດຊອບເນື້ອໃນຕາມຂົງເຂດດັ່ງ ເພື່ອປັບປຸງບັນດາບົດລາຍງານ, ບົດຊີ້ແຈງຂອງກະຊວງ, ອົງການ ຕາມຄຳເຫັນຜູ້ແທນໃຫ້ສຳເລັດ ແລະ ລົງລາຍເຊັນເປັນລາຍລັກອັກສອນ ສົ່ງໃຫ້ສະພາແຫ່ງຊາດ ຈະເຮັດໃຫ້ເອກະສານຕ່າງໆເປັນຂໍ້ມູນ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດຂອງສະພາແຫ່ງຊາດ ແຕ່ລະພາກສ່ວນ;

4) ສະມາຊິກສະພາແຫ່ງຊາດ ໃນນາມເປັນຕົວແທນໃຫ້ປະຊາຊົນລາວບັນດາເຜົ່າ ຍົກສູງຄວາມຮັບຜິດຊອບໃນການຄົ້ນຄວ້າ, ຊອກຫາແຫຼ່ງຂໍ້ມູນ, ນຳເອົາຄຳຄິດຄຳເຫັນຂອງປະຊາຊົນ ເພື່ອເປັນບ່ອນອີງໃຫ້ມີຄວາມເລິກເຊິ່ງ, ມີຄວາມເປັນເອກະພາບໃນຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ກຳມາທິການທີ່ຕົນສັງກັດ ແລະ ຄຳນຶງເຖິງຜົນປະໂຫຍດຂອງປະເທດຊາດ ຈະເຮັດໃຫ້ການປະກອບຄຳເຫັນສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ເປັນປະໂຫຍດໃຫ້ແກ່ພາກສ່ວນກ່ຽວຂ້ອງ;

5) ຄະນະເລຂາທິການສະພາແຫ່ງຊາດ ເອົາໃຈໃສ່ປະສານສົມທົບກັບຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອເຊີນບັນດາກະຊວງ, ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຕິດຕາມ, ເກັບກຳ, ບັນທຶກຄຳເຫັນຂອງຜູ້ແທນຕະຫຼອດໄລຍະການດຳເນີນກອງປະຊຸມ ລວມທັງການພິຈາລະນາຮັບຮອງວຽກງານຂອງສະພາແຫ່ງຊາດ ຈະເຮັດໃຫ້ການນຳເອົາບັນຫາທີ່ກອງປະຊຸມຍົກຂຶ້ນໄປປຶກສາຫາລືກັບຄະນະນຳຂອງຕົນ ເພື່ອແກ້ໄຂທັນເວລາ;

6) ກອງເລຂານຸການກອງປະຊຸມ ເພີ່ມທະວີການປະສານສົມທົບກັບບັນດາກຳມາທິການ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ທັງພາຍໃນ ແລະ ພາຍນອກ; ປຶກສາຫາລືວຽກງານພາຍໃນຢ່າງເປັນປົກກະຕິ ໃນໄລຍະດຳເນີນກອງປະຊຸມ ເພື່ອຕິດຕາມກວດກາ ແລະ ຊຸກຍູ້ໃນການຈັດຕັ້ງປະຕິບັດວຽກງານໃຫ້ສຳເລັດ ຈະເຮັດໃຫ້ການປະຕິບັດໜ້າທີ່ວຽກງານຂອງກອງເລຂານຸການກອງປະຊຸມ ມີຄຸນນະພາບ ແລະ ທັນເວລາດີຂຶ້ນກວ່າເກົ່າ;

7) ກົງຈັກເສນາທິການທີ່ຮັບຜິດຊອບດ້ານເອເລັກໂຕຣນິກ (ໄອທີ) ສ້າງແຜນການຝຶກອົບຮົມຢ່າງເປັນລະບົບຕໍ່ເນື່ອງໃຫ້ແກ່ຜູ້ແທນ ແລະ ພາກສ່ວນກ່ຽວຂ້ອງ ໃນການແນະນຳດ້ານເຕັກນິກ, ຂັ້ນຕອນ ແລະ ວິທີການຕ່າງໆ ສາມາດຮັບປະກັນການເຂົ້າເຖິງຂໍ້ມູນ, ເອກະສານກອງປະຊຸມ ເປັນບ່ອນອີງໃນການຄົ້ນຄວ້າປະກອບຄຳຄິດຄຳເຫັນຂອງຜູ້ແທນ ແລະ ຈະຊ່ວຍໃຫ້ມີຄວາມຊຳນິຊຳນານຂຶ້ນເລື້ອຍໆ ເພື່ອຫຼຸດຜ່ອນການໃຊ້ຈ່າຍ ແລະ ທັນເຂົ້າສູ່ທັນສະໄໝໃນຕໍ່ໜ້າທີ່ລະກ້າວ.

## II. ແຜນວຽກຈຸດສຸມພາຍຫຼັງສຳເລັດກອງປະຊຸມ

1. ຄະນະປະຈຳສະພາແຫ່ງຊາດ ດຳເນີນກອງປະຊຸມປະຈຳເດືອນຂອງຕົນ ເພື່ອພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມການສະເໜີຂອງບັນດາອົງການຈັດຕັ້ງລັດ ຕາມກົດໝາຍກຳນົດ;

2. ຄະນະເລຂາທິການສະພາແຫ່ງຊາດ ຮ່າງບົດລາຍງານຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຕໍ່ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ;

3. ກອງເລຂານຸການກອງປະຊຸມ ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;

4. ບັນດາກຳມາທິການ ແລະ ພາກສ່ວນກ່ຽວຂ້ອງ ຮີບຮ້ອນປັບປຸງບົດລາຍງານ, ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ, ມະຕິກອງປະຊຸມສະພາແຫ່ງຊາດ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງ ໃຫ້ສຳເລັດໂດຍໄວ ເພື່ອຂໍການລົງລາຍເຊັນ;

5. ບັນດາກຳມາທິການ ຊຸກຍູ້ກະຊວງ, ອົງການສືບຕໍ່ປັບປຸງເນື້ອໃນບົດລາຍງານ ແລະ ບົດຊີ້ແຈງຂອງພາກສ່ວນຕ່າງໆ ທີ່ນຳມາຜ່ານກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຕາມຄຳເຫັນຂອງຜູ້ແທນ ໃຫ້ສຳເລັດໂດຍໄວ ແລະ ລົງລາຍເຊັນເປັນລາຍລັກອັກສອນ ສົ່ງຄືນໃຫ້ສະພາແຫ່ງຊາດ;

6. ກຳມາທິການກົດໝາຍ ແລະ ກຳມາທິການກ່ຽວຂ້ອງ ປະສານສົມທົບກັບພາກສ່ວນຕ່າງໆ ຮີບຮ້ອນປັບປຸງ, ຮຽບຮຽງບັນດາເນື້ອໃນກົດໝາຍ ທີ່ໄດ້ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ

IX ໃຫ້ສຳເລັດ ເພື່ອລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາກ່ອນສະເໜີປະທານປະເທດ ປະກາດໃຊ້ຕາມກົດໝາຍກຳນົດ;

7. ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ຮັບຜິດຊອບແນະນຳໃຫ້ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ເອົາໃຈໃສ່ປະສານສົມທົບໃນການນຳພາ-ຊີ້ນຳສະພາປະຊາຊົນຂັ້ນແຂວງ ເພື່ອກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II ໃນຂອບເຂດທົ່ວປະເທດ ຕິດພັນກັບການສ້າງກະກຽມແຜນການລົງໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະພາແຫ່ງຊາດ ຢູ່ບັນດາເຂດເລືອກຕັ້ງຕ່າງໆ;

8. ຄະນະເລຂາທິການສະພາແຫ່ງຊາດ ຮ່າງຄຳແນະນຳຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;

9. ຄະນະເລຂາທິການສະພາແຫ່ງຊາດ ເກັບກຳ, ສຳເນົາ ແລະ ສັງລວມບັນດາເອກະສານກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອຈັດສົ່ງໃຫ້ເປົ້າໝາຍຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນ ພ້ອມທັງສະໜອງຂໍ້ມູນຂຶ້ນເວັບໄຊ ແລະ ຖານຂໍ້ມູນເອເລັກໂຕຼນິກ.

## III. ຄາດຄະເນແຜນການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX

ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຄາດຄະເນຈະດຳເນີນຂຶ້ນໃນເດືອນ ມິຖຸນາ ຫາ ເດືອນ ກໍລະກົດ 2023 ຊຶ່ງຈະໄດ້ພິຈາລະນາຮັບຮອງເອົາເນື້ອໃນຕົ້ນຕໍ ດັ່ງນີ້:

1. ບົດລາຍງານການເຄື່ອນໄຫວວຽກງານກາງສະໄໝ

1) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

2) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນງົບປະມານແຫ່ງລັດ 5 ປີ (2021-2025); ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

3) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນເງິນຕາ 5 ປີ (2021-2025); ການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

4) ບົດລາຍງານການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ;

5) ບົດລາຍງານການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງສະພາແຫ່ງຊາດ ຊຸດທີ IX.

2. ພິຈາລະນາວຽກງານຕ່າງໆຈຳນວນໜຶ່ງ

1) ບົດລາຍງານການຕິດຕາມກວດກາ ການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມ ແລະ ການປັບປຸງລະບົບປະກັນສັງຄົມ ທີ່ມີຄຸນນະພາບ;

2) ພິຈາລະນາ ແລະ ຮັບຮອງເອົາບັນດາຮ່າງກົດໝາຍ ຈຳນວນ 13 ສະບັບ;

3) ລາຍງານ, ຊີ້ແຈງຕໍ່ບັນຫາພົ້ນເດັ່ນໃດໜຶ່ງ ທີ່ເກີດຂຶ້ນໃນສັງຄົມ ຂອງລັດຖະບານ ແລະ ພາກສ່ວນກ່ຽວຂ້ອງ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX; ຊຸກຍູ້ແກ້ໄຂບັນດາຄະດີທີ່ແກ່ຍາວກັບບັນດາພາກສ່ວນກ່ຽວຂ້ອງ ເພື່ອຫຼຸດຜ່ອນຂະບວນການຄຳຮ້ອງຂໍຄວາມເປັນທຳແບບຖີບໄປຖີບມາຫຼາຍຄັ້ງ;

4) ຈັດຕັ້ງການປະເມີນຜົນດ້ວຍການລົງຄະແນນສຽງ ຫຼື ດ້ວຍການໃຫ້ຄະແນນໄວ້ວາງໃຈ ໃນການປະຕິບັດໜ້າທີ່ວຽກງານຂອງບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ລວມທັງຈັດຕັ້ງການໃຫ້ຄະແນນຕໍ່ເປົ້າໝາຍທີ່ລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ ຢູ່ກອງປະຊຸມສະພາແຫ່ງຊາດ;

5) ການປະເມີນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດຍຸຕິທຳ.

ຄະນະປະຈຳສະພາແຫ່ງຊາດ

ປະທານ

ປອ ໄຊສົມພອນ ພົມວິຫານ